ຄຸນຄ່າອັນຍິ່ງໃຫຍ່ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ
ຕໍ່ການພັດທະນາໃນພາກພື້ນ

MRC No. 18/08

ບົດບາດຂອງຄະນະກຳມາທິການແມ່ນ້ຳຂອງສາກົນ (MRC) ໃນການພັດທະນາຊັບພະຍາກອນນ້ຳໃນທົ່ວອ່າງນ້ຳຂອງຕອນລຸ່ມໄດ້ຖືກເນັ້ນຍ້ຳອີກຄັ້ງໜຶ່ງໃນພິທີເປີດກອງປະຊຸມສະພາມົນຕີຄະນະກຳມາທິການແມ່ນ້ຳຂອງສາກົນຄັ້ງທີ 15 ທີ່ວຽງຈັນມື້ນີ້. ພະນະທ່ານ ນາງ ເຂັມແພງ ພົນເສນາ, ປະທານສະພາມົນຕີປະຈຳສົກປີ 2008-2009, ພ້ອມທັງເປັນລັດຖະມົນຕີ ແລະ ຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ໄດ້ກ່າວວ່າ ຄະນະກຳມາທິການໄດ້ຮັບຄວາມເຄົາລົບນັບຖືຢ່າງສູງໃນນາມຜູ້ຮ່ວມງານທີ່ໄວ້ວາງໃຈໄດ້ໃນການພັດທະນາແບບຍືນຍົງ ແລະ ເປັນກົນໄກອັນປ່ຽມຄຸນຄ່າ ເພື່ອການຮ່ວມມືໃນອ່າງແມ່ນ້ຳຂອງ.

ສະພາມົນຕີຂອງ MRC, ປະກອບດ້ວຍລັດຖະມົນຕີຈາກບັນດາປະເທດສະມາຊິກເຊັ່ນ: ກຳປູເຈັຍ, ສປປ ລາວ, ໄທ ແລະ ສສ ຫວຽດນາມ, ແມ່ນການຈັດຕັ້ງຂັ້ນສູງສຸດຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ເຊິ່ງປະຊຸມກັນປີລະຄັ້ງ ເພື່ອຕັດສິນນະໂຍບາຍ ແລະ ໃຫ້ທິດນຳຕໍ່ບັນດາແຜນງານຕ່າງໆ ຂອງ MRC ເພື່ອຈັດຕັ້ງປະຕິບັດສົນທິສັນຍາ 1995 ວ່າດ້ວຍການຮ່ວມມືເພື່ອການພັດທະນາແບບຍືນຍົງໃນອ່າງນ້ຳຂອງ.

ທ່ານ ນາງ ເຂັມແພງໄດ້ກ່າວວ່າແມ່ນ້ຳຂອງເປັນທີ່ເຄົາລົບບູຊາປຽບເໝືອນ "ແມ່ແຫ່ງນ້ຳ" ໃນ ສປປ ລາວ, ທີ່ເປັນອູ່ເຂົ້າອູ່ປາ ແລະ ເປັນພື້ນຖານດ້ານເສດຖະກິດ ແລະ ວັດທະນະທຳທີ່ສືບທອດກັນມາ. ທ່ານຍັງກ່າວຕື່ມອີກວ່າການນຳໃຊ້ ແບບຮອມໝູ່ ແລະ ການຄຸ້ມຄອງແບບຍືນຍົງຂອງຊັບພະຍາກອນທຳມະຊາດແມ່ນສິ່ງສຳຄັນຍອດຍິ່ງຕໍ່ເສດຖະກິດໃນອະນາຄົດ ໃນບັນດາປະເທດແມ່ນ້ຳຂອງ ແລະ ສິ່ງທີ່ຈັດຕັ້ງປະຕິບັດໂດຍ MRC ແມ່ນມີຄ່າອັນຍິ່ງໃຫຍ່ຕໍ່ບັນດາປະເທດສະມາຊິກ. ອົງການຈັດຕັ້ງດັ່ງກ່າວນີ້ມີຄວາມສົນໃຈອັນພື້ຖານໃນການສ້າງຄວາມສົມດຸນຂອງການນຳໃຊ້ຊັບພະຍາກອນ ໃນອ່າງນ້ຳຂອງ ເພື່ອວ່າຊັບພະຍາກອນທີ່ຊົມໃຊ້ໃນ 4 ປະເທດ ຈະນຳມາເຊິ່ງຜົນປະ

ໄຫຍດຮ່ວມກັນ ແລະ ຄວາມສົມບູນພູນສຸກຂອງຜູ້ຄົນ. ອົງການຈັດຕັ້ງແຫ່ງນີ້ຍັງມີຖານຄວາມຮູ້ ແລະ ຄວາມຊ່ຽວຊານດ້ານວິຊາການ ເພື່ອຊ່ວຍໃຫ້ພວກເຮົາສາມາດໄດ້ຮັບຜົນປະໂຫຍດສູງສຸດ ຈາກຊັບພະຍາກອນເຫຼົ່ານີ້ໃນວິຖີທາງແບບຍືນຍົງ".

ເທື່ອນີ້ແມ່ນເປັນຄັ້ງທໍາອິດທີ່ກອງປະຊຸມສະພາມົນຕີໄດ້ຖືກຈັດຮ່ວມເຂົ້າກັບກອງປະຊຸມກັບກຸ່ມທີ່ປຶກສາຜູ້ໃຫ້ທຶນ, ຄືບັນດາປະເທດ ແລະ ອົງການຈັດຕັ້ງທີ່ ໃຫ້ທຶນສະໜັບສະໜູນຫລາຍແກ່ MRC. ທ່ານ ເຈເຣມີ ເບີດ, ຫົວໜ້າຜູ້ບໍລິຫານຂອງ MRC ໄດ້ເນັ້ນໜັກວ່ານຸມມອງຂອງບັນດາປະເທດຄູ່ຮ່ວມພັດທະນາ ແລະ ຂໍ້ແນະນໍາຕໍ່ບັນຫາທີ່ເປັນແກ່ນສານແມ່ນສໍາຄັນທີ່ສຸດ. ໃນຊ່ວງວັນປະຊຸມ, ທັງ 4 ປະເທດສະມາຊິກ ແລະ ປະເທດຄູ່ຮ່ວມພັດທະນາຈະຮ່ວມກັນປຶກສາຫາລືການເລືອກທີ່ຕັ້ງຖາວອນຂອງກອງເລຂາ MRC, ປະເດັນດ້ານການເງິນ, ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບັນດາແຜນງານເຊັ່ນ: ແຜນພັດທະນາອ່າງເປັນຕົ້ນ.

ກອງປະຊຸມຍັງຈະໄດ້ປຶກສາຫາລືເຫດການພົ້ນເດັ່ນຂອງ MRC ລວມມີການປຶກສາຫາລືລະຫວ່າງກຸ່ມຜົນປະໂຫຍດຕ່າງໆ ໃນແຜນງານໄຟຟ້ານໍ້າຕົກ ເຊິ່ງຈັດໃນເດືອນ ກັນຍາ ຢູ່ທີ່ວຽງຈັນ ແລະ ບັນຫານໍ້າຖ້ວມທີ່ເກີດຕາມລໍານໍ້າຂອງຢູ່ ສປປລາວ ແລະ ປະເທດໄທ ໃນເດືອນສິງຫາຜ່ານມາ.

ການປຶກສາຫາລືເລື່ອງໄຟຟ້ານໍ້າຕົກໄດ້ ສ້າງປະຫວັດການເມື່ອເປັນເທື່ອທໍາອິດທີ່ປະເດັນດັ່ງກ່າວໄດ້ຖືກປຶກສາຫາລືລົງເລິກໂດຍ 4 ປະເທດ ໂດຍຊ້ອງໜ້າກັບກຸ່ມຜົນປະໂຫຍດທີ່ກ້ວາງຂວາງ, ລວມເຖິງຜູ້ເຂົ້າຮ່ວມຈາກ ສປ ຈີນ ແລະ ມຽນມ້າ. ທ່ານ ນາງ ເຂັມແພງ ຍັງໄດ້ຍ້ອງຍໍ MRC ໃນການຫລິ້ນບົດບາດເປັນແກນນໍາ, ໃນທີ່ນີ້ໝາຍເຖິງວ່າມັນມີຄວາມສໍາຄັນທີ່ຈະມີຄົນໃດໜຶ່ງສາມາດໃຫ້ຄໍາແນະນໍາທີ່ເປັນກາງ ແລະ ດ້ວຍຄວາມຊ່ຽວຊານ ແລະ ທັງສາມາດເປັນເວທີສົນທະນາທີ່ບັນດາປະເທດສະມາຊິກສາມາດ ຮ່ວມກັນ ປຶກສາຫາລື ແຜນການພັດທະນາຂອງຕົນເອງ. ທ່ານ ຍັງເສີມຕື່ມອີກວ່າ MRC ສາມາດໃຫ້ມຸມມອງ ແລະ ຂໍ້ມູນຂ່າວສານ ບົນພື້ນຖານຄວາມຮູ້ແລະຄວາມຊ່ຽວຊານ ແລະ ດ້ວຍເຄື່ອງມື ແລະ ຂະບວນການທີ່ໄດ້ສ້າງຂຶ້ນພາຍໃຕ້ກອບຂອງສົນທິສັນຍາປີ 1995. ໃນຈຸດນີ້ ບົດບາດຂອງ MRC ແມ່ນເພື່ອຊ່ວຍບັນດາປະເທດພາຄີສ້າງຄວາມອາດສາມາດ ແລະ ການຈັດຕັ້ງທີ່ຈໍາເປັນເພື່ອຈະສາມາດຕັດສິນບັນຫາຢ່າງມີຂໍ້ມູນໄດ້.